ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ສະພາປະຊາຊົນແຂວງແຂວງໄຊຍະບູລີ

ເລກທີ ..10../ສພຂ.ຊຍ

ໄຊຍະບູລີ, ວັນທີ ..17..ເມສາ 2026

# ມະຕິ

## ກອງປະຊຸມສະພາປະຊາຊົນແຂວງ

## ວ່າດ້ວຍການເລືອກຕັ້ງ ຮອງປະທານສະພາປະຊາຊົນແຂວງ

## ແລະ ກຳມະການຄະນະປະຈຳສະພາປະຊາຊົນແຂວງ

- ອີງຕາມ ມາດຕາ 78 ຂໍ້ທີ 3 ຂອງລັດຖະທຳມະນູນ ແຫ່ງ ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ (ສະບັບປັບປຸງ 2025).
- ອີງຕາມ ມາດຕາ 53 ຂໍ້ທີ 2 ຂອງກົດໝາຍວ່າດ້ວຍສະພາປະຊາຊົນຂັ້ນແຂວງ ສະບັບປັບປຸງ ປີ 2024.
- ອີງຕາມ ໜັງສືສະເໜີຂອງທ່ານປະທານສະພາປະຊາຊົນແຂວງ ຊຸດທີ V ກ່ຽວກັບມາດຕະຖານຂອງປະທານສະພາປະຊາຊົນແຂວງ ແລະ ເປົ້າໝາຍຈະເລືອກຕັ້ງເປັນຮອງປະທານສະພາປະຊາຊົນແຂວງ ແລະ ກຳມະການຄະນະປະຈຳສະພາປະຊາຊົນແຂວງ ຊຸດທີ V ລົງວັນທີ 9 ເມສາ 2026.

ຜ່ານການຄົ້ນຄວ້າພິຈາລະນາ, ປະກອບຄຳເຫັນຢ່າງເລິກເຊິ່ງກວ້າງ ຂອງບັນດາທ່ານສະມາຊິກສະພາປະຊາຊົນແຂວງ ຕໍ່ການສະເໜີຂອງຄະນະປະຈຳສະພາປະຊາຊົນແຂວງ ຢູ່ໃນກອງປະຊຸມຄັ້ງປະຖົມມະລຶກ ຂອງສະພາປະຊາຊົນແຂວງ ຊຸດທີ V ໃນວາລະຕອນເຊົ້າ ຂອງວັນທີ 9 ເມສາ 2026.

## ກອງປະຊຸມຕົກລົງ:

**ມາດຕາ 1** ເລືອກຕັ້ງ ຮອງປະທານສະພາປະຊາຊົນແຂວງ ຊຸດທີ V ຈຳນວນ 2 ທ່ານ ຕາມການສະເໜີຂອງ ປະທານສະພາປະຊາຊົນແຂວງ ດັ່ງມີລາຍຊື່ລຸ່ມນີ້:

1. ທ່ານ ດຣ ນາງ ໄກຍະສອນ ສີດາ — ກຳມະການ ປະຈຳພັກແຂວງ ເປັນຮອງປະທານສະພາປະຊາຊົນແຂວງ ທັງເປັນຮອງປະທານຄະນະປະຈຳສະພາປະຊາຊົນແຂວງ;
2. ທ່ານ ກາວີ ເກດດົນລີ — ກຳມະການພັກແຂວງ ເປັນຮອງປະທານສະພາປະຊາຊົນແຂວງ, ທັງເປັນຮອງປະທານຄະນະປະຈຳສະພາປະຊາຊົນແຂວງ.

**ມາດຕາ 2** ເລືອກຕັ້ງ ກຳມະການຄະນະປະຈຳສະພາປະຊາຊົນແຂວງ ຊຸດທີ V ຈຳນວນ 3 ທ່ານ ຕາມການສະເໜີຂອງປະທານສະພາປະຊາຊົນແຂວງ ດັ່ງມີລາຍຊື່ລຸ່ມນີ້:

1. ທ່ານ ນາງ ວັນນາ ພິມວິສອນ ກຳມະການພັກແຂວງ;
2. ທ່ານ ປອ ແວດເພັດ ສີບຸນມາ;
3. ທ່ານ ເສັງວິໄລ ສີງ;

**ມາດຕາ 3** ອົງການຈັດຕັ້ງພັກ-ລັດ, ແນວລາວສ້າງຊາດ, ສະຫະພັນນັກຮົບເກົ່າ, ອົງການຈັດຕັ້ງມະຫາຊົນ, ບັນດາທ່ານທີ່ຖືກເລືອກຕັ້ງ ຈົ່ງຮັບຮູ້ ແລະ ຈັດຕັ້ງປະຕິບັດມະຕິສະບັບນີ້ ຢ່າງເຂັ້ມງວດ.

**ມາດຕາ 4** ມະຕິສະບັບນີ້ ມີຜົນສັກສິດນັບແຕ່ວັນລົງລາຍເຊັນເປັນຕົ້ນໄປ.

**ປະທານສະພາປະຊາຊົນແຂວງ**